ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໕໑/ປພຖຊ/໐໔໔໐ລ**

# ບົດຄວາມ

## ຕອບໂຕ້ພອນປີໃໝ່ ພສ. 2552

## ຂອງ ປະທານປະເທດ (ຕອນ 1.)

ທ່ານ ຈູມມະລີ ໄຊຍະສອນ ປະທານປະເທດ ໄດ້ອອກມາກ່າວ ອວຍໄຊໃຫ້ພອນ ແກ່ປວງຊົນລາວ ເນື່ອງໃນໂອກາດປີໃໝ່ລາວ ພສ. 2552 ນີ້. ທ່ານ ໄດ້ເນັ້ນໜັກວ່າ "ທົ່ວປວງຊົນລາວ ມີຄວາມມ່ວນຊື່ນ ແລະມີຄວາມປິຕິຍິນດີຢ່າງຍິ່ງ ຕໍ່ຄວາມສຳເລັດ ອັນຈົບງາມ ໃນການປະຕິບັດມະຕິ 8 ຂອງພັກ ແລະແຜນພັທນາ ເສຖກິດສັງຄົມ 5 ປີ ແຫ່ງຣັຖ ຄັ້ງທີ 6. ນອກຈາກນີ້, ທ່ານຍັງໄດ້ເວົ້າເຖິງ ການສເລີມສລອງ ວັນກອງທັບ ຄົບຮອບ 60 ປີ ຢ່າງຄຶກຄື້ນ; ເວົ້າເຖິງຄວາມສຳເລັດ ໃນການເປັນເຈົ້າພາບ ກອງປະຊຸມສຸດຍອດ ກຳປູເຈັຽ, ລາວແລະວຽດນາມ ຄັ້ງທີ 5 ໃນເດືອນ ພຶສຈິກາ 2008 ແລະກອງປະຊຸມ ຣັຖສະພາ ອາຊີ-ປາຊີຟິກ ຄັ້ງທີ 17 ເດືອນ ມົກະຣາ 2009 ນີ້ ຕື່ມອີກ, ທຸກຢ່າງ ໄດ້ຮັບຄວາມສຳເຣັດເປັນຢ່າງດີ.

ແຕ່ທ່ານ ຊໍ້າພັດຮຽກຮ້ອງ ໃຫ້ທົ່ວປວງຊົນລາວ ມີຄວາມສາມະຄີ ເປັນປຶກແຜ່ນແໜ້ນໜາ, ສ້າງ ຄວາມເຂັ້ມແຂງພາຍໃນຊາດ ຢ່າງສຸດຂີດ ເພື່ອຮັບປະກັນ ເຮັດໃຫ້ປະເທດຊາດ ມີຄວາມສງົບ, ມີຄວາມເປັນຣະບຽບຮຽບຮ້ອຍ ຢ່າງໜັກແໜ້ນ, **ສກັດກັ້ນທຸກກົນອຸບາຍທັນປ່ຽນໂດຍສັນຕິ ຂອງພວກ ອິດທິກຳລັງປໍ່ຣະປັກ ທີ່ຫວັງມ້າງເພຣະບອບໃໝ່ຂອງພວກເຮົາ.**

ການທີ່ທ່ານປະທານປະເທດ ຮຽກຮ້ອງ ໃຫ້ສະກັດກັ້ນ ແລະຕ້ານທຸກກົນອຸບາຍ ທັນປ່ຽນໂດຍສັນຕິ ຂອງ ພວກອິດທິກຳລັງປໍ່ຣະປັກ ທີ່ຫວັງມ້າງເພຣະບອບໃໝ່ນັ້ນ, ປະຊາຊົນລາວ, ອົງການຈັດຕັ້ງສາກົນແລະ ປະເທດເພື່ອນມິດໃນທົ່ວໂລກ ທີ່ກຳລັງຈັບຕາເບິ່ງ ການແກ້ໄຂບັນຫາລາວ ໃນປະຈຸບັນນີ້ ດ້ວຍຄວາມ ກະຕືລືລົ້ນ ແລະຕິດຕາມຢ່າງໃກ້ຊິດ ເບິ່ງການເອົາທ່າທີທາງການເມືອງ ຊຶ່ງສແດງອອກໃນຄຳປາສັຍ ອວຍພອນ ປີໃໝ່ຂອງທ່ານ ທີ່ພໍສລຸບໄດ້ດັ່ງນີ້:

1. ມັນບົ່ງບອກເຖິງຄວາມຫລົ້ມເຫລວ ໃນການບໍຣິຫານປະເທດຊາດ ແບບຜເດັດການພັກດຽວ ຢ່າງສິ້ນເຊີງ.
2. ມັນບົ່ງບອກເຖິງ ການຕໍ່ສູ້ຂອງປະຊາຊົນ ໄດ້ກ້າວເຂົ້າສູ່ຫລັກໄຊຊ໌ ຢ່າງສງ່າຜ່າເຜີຍ.
3. ມັນບົ່ງບອກ ເຖິງການຮັບຮູ້ ການຕໍ່ສູ້ ຂອງປະຊາຊົນ ຕາມແນວທາງສັນຕິວິທີ ທີ່ພັກຣັດ ໄດ້ເມີນເສີຍ ມາໂດຍຕລອດນັ້ນ.
4. ມັນບົ່ງບອກເຖິງ ຄວາມບໍ່ໄວ້ເນື້ອເຊື່ອໃຈ ຈາກຕ່າງປະເທດ ແລະຖືກບີບຣັດຢ່າງຮຸນແຮງ ໃຫ້ປ່ຽນຣັຖບານ ໂດຍໄວ.
5. ມັນບົ່ງບອກ ເຖິງບັ້ນອາວະສານ ຂອງອຳນາດ ຜເດັດການໃນລາວ.

ການຮຽກຮ້ອງ ໃຫ້ທົ່ວປວງຊົນລາວ ມີຄວາມສາມະຄີ ເປັນປຶກແຜ່ນແໜ້ນໜາ, ສ້າງຄວາມ ເຂັ້ມແຂງພາຍໃນຊາດຢ່າງສຸດຂີດ ເພື່ອຮັບປະກັນຄວາມສງົບ ແລະຄວາມເປັນຣະບຽບຮຽບຮ້ອຍ ຢ່າງໜັກແໜ້ນນັ້ນ, ມັນກໍຊີ້ໃຫ້ເຫັນ ເຖິງຄວາມຫລົ້ມເຫລວ ໃນການບໍຣິຫານປະເທດຊາດແບບ ຜເດັດການ ພັກດຽວ ທີ່ບໍ່ສາມາດ ຈະຄວບຄຸມດ້ວຍ ອຳນາດປາຍປືນ ອີກຕໍ່ໄປໄດ້ແລ້ວ! ການບໍຣິຫານ ປະເທດຊາດ ຈຶ່ງມີຄວາມຫລົ້ມເຫລວ ໃນທຸກໆດ້ານ: ການທະຫານ, ການເມືອງ, ເສຖກິດ, ສັງຄົມ ແລະ ວັທນະທັມ.

ຜູ້ນຳກອງກຳລັງຕ່າງໆມີຄວາມບໍ່ພໍໃຈ, ແຕກແຍກກັນຂຶ້ນ... ຈົນເຖິງຂັ້ນ ທ່ານ ບຸນຍັງ ວໍຣະຈິດ ຮຽກຮ້ອງກອງປະຊຸມດ່ວນ ຢູ່ ວິທຍາຄານ ໄກສອນ ພົມວິຫານ ໃນເດືອນ 1 \ 2008 ເພື່ອຂໍໃຫ້ ຜູ້ນຳກອງກຳລັງ ຕ່າງໆ ມີຄວາມສາມະຄີກັນ, ພ້ອມທັງ ສັ່ງໃຫ້ທ່ານ ພິລໂທ ດວງໃຈ ພິຈິດ ລົງໄປກ້ຽວກ່ອມ ນາຍແລະພົນທະຫານ ຕາມກົມກອງຕ່າງໆອີກດ້ວຍ.

ກອງທັບ ທີ່ພັກປະຊາຊົນປະຕິວັດລາວເປັນຜູ້ກໍ່ຕັ້ງແລະສຶກສາອົບລົມ ໃຫ້ຮັກຣະບອບໃໝ່ ສັງຄົມນິຍົມ ແລະໃຫ້ເຊື່ອໝັ້ນການນຳພາຂອງພັກ ຢ່າງຕາຍໃຈນັ້ນ; ດຽວນີ້, ພວກເຂົາຂາດສັດທາ ຕໍ່ການບໍຣິຫານປະເທດຊາດ ຂອງພັກຣັດໝົດແລ້ວ! ຍ້ອນພັກຣັດ ຂາດຄຸນທັມ, ຂາດອະຣິຍະທັມ, ເປັນຜູ້ທໍຣະຍົດ ຕໍ່ນັກຣົບວິຣະຊົນ, ຕໍ່ທະຫານທີ່ເສັຽອົງຄະ, ຕໍ່ນັກຣົບອາວຸໂສທີ່ອອກໄປກິນເບັ້ຽບຳນານ, ຕໍ່ນັກຣົບແນວໜ້າ, ພັກຣັດ ບໍ່ໄດ້ໃສ່ໃຈ ເຖິງຊີວິດການເປັນຢູ່ ຂອງພວກເຂົາແຕ່ຢ່າງໃດເລີຍ, ໃຫ້ເງິນເດືອນ ຕ່ຳທີ່ສຸດ!... ຕ້ອງໄດ້ຕິດໜີ້ກິນກ່ອນ, ໄດ້ເງິນເດືອນມາ ໃຊ້ໜີ້ ກໍບໍ່ພໍ. ຕໍ່ຄອບຄົວ ລູກ ເມັຽ ທະຫານ, ກໍປະປ່ອຍພວກເຂົາໃຫ້ຢູ່ຢ່າງອຶດຫີວ. ການນຸ່ງຫົ່ມ ກໍຂາດເຂີນ ຫາສິ້ງເສື້ອຈະປ່ຽນ

ຖ່າຍກໍບໍ່ມີ... ລູກຫລານ ກໍບໍ່ໄດ້ເຂົ້າໂຮງຮຽນ ແລະບໍ່ໄດ້ຮັບການປິ່ນປົວເໝືອນດັ່ງທີ່ໄດ້ໃຫ້ຄຳໝັ້ນສັນຍາຕໍ່ກັນ ໄວ້ໃນປາງສົງຄາມວ່າ "**ສຸຂ ກໍພ້ອມກັນສຸຂ, ທຸກ ກໍພ້ອມກັນທຸກ**" ນັ້ນ ແຕ່ຢ່າງໃດເລີຍ.

ໃນດ້ານການເມືອງແລ້ວ, ປະຊາຊົນລາວ ບໍ່ໃຫ້ການອູ້ມຊູ ສນັບສນູນພັກຣັດອີກຕໍ່ໄປ... ຍ້ອນຕັດສິດທິເສຣີພາບ ຂອງປະຊາຊົນ, ເປັນຣັຖບານຊີ້ຕົວະ ເວົ້າແນວນຶ່ງ ແຕ່ຊໍ້າພັດເຮັດໄປອີກແນວນຶ່ງ! ເປັນຣັຖບານຫຸ່ນຂອງວຽດນາມ ແລະຮັບໃຊ້ຜົນປໂຍດຂອງວຽດນາມ. ພັກຣັດໄດ້ກວາດຕ້ອນ ແລະປຸ້ນເອົາເງິນກີບ ຂອງຊາດ ຂອງປະຊາຊົນ ໃນສມັຍ ພຣະຣາຊອານາຈັກລາວ ທີ່ມີຄ່າໃນການແລກປ່ຽນ 200 ກີບ ຕໍ່ 1 ດອນລາສະຫະຣັດນັ້ນໄປໝົດ!. ພັກຣັດ ໄດ້ເຊັນສັນຍາມິຕພາບ ລາວ-ວຽດ 25 ປີ ແລະຕໍ່ໄດ້ອີກ ເທື່ອລະ 10 ປີ ເພື່ອຂາຍຊາດໃຫ້ວຽດນາມ. ພັກຣັດມີການສົມຮູ້ຮ່ວມຄິດກັບຕ່າງຊາດ ໃຫ້ເຂົ້າມາຂຸດຄົ້ນບໍ່ແຮ່ໂລຫະ, ສ້າງເຂື່ອນ, ສຳປະທານທີ່ດິນປູກຝັງ, ສ້າງຣີສສອຊ໌ ກາສີໂນ ຕ່າງໆ ເພື່ອເບື່ອເມົາຄົນລາວ ໃຫ້ກາຍເປັນຄົນພິການທາງດ້ານຮ່າງກາຍ ແລະຈິດໃຈ.

ພັກຣັດ ຍັງຂາຍປະຊາຊົນ ໂດຍທາງຕຣົງແລະທາງອ້ອມຕື່ມອີກ, ມີການກີດນ່ວງຖ່ວງດຶງ ຄວາມຈເຣີນເຕີບໂຕທາງດ້ານສະຕິປັນຍາແລະຮ່າງກາຍ ດ້ວຍການສກັດກັ້ນບໍ່ສ້າງໂຮງຮຽນ ໂຮງໝໍໃຫ້ລູກລາວຫລານລາວ ໄດ້ເຂົ້າຮ່ຳຮຽນແລະປິ່ນປົວເທົ່າທີ່ຄວນ. ຕຣົງກັນຂ້າມ, ຊໍ້າພັດເລັ່ງສ້າງກົນໄກອະບາຍະມຸກຂື້ນໃນທົ່ວປະເທດ ເພື່ອໃຫ້ຊາຍໜຸ່ມຍິງສາວ ທີ່ເປັນກະດູກສັນຫລັງຂອງຊາດ ໄດ້ຕົກເປັນທາດ ຂອງຢາເສບຕິດ, ເປັນເຍື່ອ ຂອງການຄ້າມະນຸດ, ເປັນແຫລ່ງແຜ່ເຊື້ອໂຣກ໌ HIV\AIDS. ເປັນນັກເລງອັນຕະພານ, ເປັນເດັກອະນາຖາ ພະເນຈອນ ນັບວັນນັບຫລາຍຂື້ນ.

ພັກຣັດ ເປັນກຸ່ມຄົນທີ່ມີຈິດໃຈອຳມະຫິດ, ຂູດຣີດແຮງງານຢ່າງໄຮ້ມະນຸສທັມ; ເກັບພາສີປະຊາຊົນໃນທຸກຣູບແບບ, ກັ່ນແກ້ງ ບໍ່ເບີກເງິນເດືອນ ໃຫ້ພນັກງານເປັນປົກະຕິ, ຂູດຣີດ ປັບໃໝຄົນລາວທີ່ກັບມາຈາກການຮັບຈ້າງໃນເມືອງໄທຍ ທັງໆທີ່ຮູ້ຢູ່ວ່າ ພວກເຂົາ ໄດ້ສ່ຽງຊີວິດ ໄປຊອກຫາທຳງານໄດ້ເງິນມາດ້ວຍຄວາມລຳບາກ ຍ້ອນພັກຣັດ ບໍ່ສາມາດທີ່ຈະຫາງານ ໃຫ້ພວກເຂົາທຳໄດ້.

ພັກຣັດ ບໍ່ພຽງແຕ່ເປັນກຸ່ມຄົນຂາຍຊາດ ຂາຍປະຊາຊົນເທົ່ານັ້ນ, ຍັງເປັນກຸ່ມຄົນທີ່ຕ້ານສາກົນອີກດ້ວຍ. ພັກຣັດ ໄດ້ເຊັນຮ່ວມເປັນພາຄີ ກັບອົງການຈັດຕັ້ງສາກົນໃນຫລາຍດ້ານ ເປັນຕົ້ນ: ການເຄົາຣົບຕໍ່ສິດເສຣີພາບ ຂອງປະຊາຊົນ, ການຮັກສາສະພາບແວດລ້ອມ, ການແກ້ໄຂເຍົາວະຊົນ ທີ່ມີບັນຫາ, ການບຸຣະນະປົກປັກຮັກສາມໍຣະດົກໂລກ, ຕ້ານການຄ້າຢາເສບຕິດ, ຕ້ານການຄ້າມະນຸດ, ຕ້ານການສໍ້ຣາດບັງຫລວງຕ່າງໆເຫລົ່ານີ້... ລ້ວນແລ້ວແຕ່ເປັນການຕົວະເອົາເງິນ ຂອງອົງການຈັດຕັ້ງສາກົນ ທີ່ພວກເຂົາເອີ້ນກັນວ່າ "**ການຊ່ວຍເຫລືອລ້າ**"ນັ້ນ ມາເຂົ້າຖົງສ່ວນຕົວຂອງຕົນແລະພັກພວກເທົ່ານັ້ນເອງ.

ອັນນີ້, ແມ່ນສ່ວນນຶ່ງ ຂອງຄວາມຫລົ້ມເຫລວ ໃນການບໍຣິຫານປະເທດຊາດ ແບບຜເດັດການພັກດຽວ ຂອງພັກຣັດ ວຽງຈັນ.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ເຫັນວ່າ "ການທີ່ປະຊາຊົນລາວ, ນັກຣົບວິຣະຊົນ ແລະອ້າຍເອື້ອຍນ້ອງໃນຖິ່ນແຖວ ບໍ່ໃຫ້ການສນັບສນູນ ອູ້ມຊູພັກຣັດອີກຕໍ່ໄປນັ້ນ, ເປັນການກະທຳທີ່ຖືກຕ້ອງທີ່ສຸດແລ້ວ! ເພາະມັນແມ່ນວິທີດຽວ ທີ່ຈະປົກປັກຮັກສາຜືນແຜ່ນດິນ

ອັນຄົບຖ້ວນ ທີ່ຍັງເຫລືອຢູ່ໃນປະຈຸບັນນີ້ ໄວ້ໃຫ້ລູກຫລານຂອງລາວ ໄດ້ມີບ່ອນຢູ່ ແລະສ້າງສາ ທຳມາຫາກິນ ສືບຕໍ່ໄປ ຕລອດກາລະນານ.

ພ້ອມດຽວກັນນີ້, ພວກເຮົາ ຂໍຮຽກຮ້ອງມາຍັງ ອົງການຈັດຕັ້ງສາກົນ ທີ່ເຄີຍໃຫ້ການຊ່ວຍ ເຫລືອ ໃນໂຄງການຕ່າງໆ ທີ່ພັກຣັດ ວຽງຈັນ ໄດ້ຮ່ວມເຂົ້າເປັນພາຄີ ປົກປ້ອງຊ່ວຍກັນນັ້ນ, ຈົ່ງໄດ້ທົບທວນ ການຊ່ວຍເຫລືອຄືນໃໝ່, ຢ່າໄດ້ຫລົງກົລລວງພັກຣັດ ວຽງຈັນ ທີ່ຈອບຂໍເອົາການຊ່ວຍເຫລືອລ້ານັ້ນ, ມາເຂົ້າຖົງສ່ວນຕົວອີກຕໍ່ໄປ ເພາະມັນເປັນການສົ່ງເສີມ ການສໍ້ຣາດບັງຫລວງ ໃຫ້ເກີດມີຂຶ້ນ ຢ່າງບໍ່ມີວັນສິ້ນສຸດລົງໄດ້ເທົ່ານັ້ນເອງ.

*(ເຊີນຕິດຕາມ ຕອນຕໍ່ໄປ.)*

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໒໔ ເມສາ ໒໐໐໙**